ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
-----====000====-----

ທະນາຄານແຫ່ງ ສປປ ລາວ
ກົມບັນຊີ-ການເງິນ

ເລກທີ : 589/ກບຊ
ນະຄອນຫຼວງວຽງຈັນ, ວັນທີ : 13 0 NOV 2015

# ບົດແນະນຳ
# ການບັນທຶກບັນຊີກ່ຽວກັບຊັບສົມບັດຄົງທີ່
# ສຳລັບທະນາຄານທຸລະກິດ ແລະ ສະຖາບັນການເງິນ

- ອີງຕາມກົດໝາຍສ່ວຍສາອາກອນ (ສະບັບປັບປຸງ) ສະບັບເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011.
- ອີງຕາມຂໍ້ຕົກລົງວ່າດ້ວຍການຮັບຮອງແຜນຜັງການບັນຊີ ແລະ ແບບຟອມໃບລາຍງານການເງິນສຳລັບທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ຂຶ້ນກັບທະນາຄານແຫ່ງ ສປປ ລາວ ສະບັບເລກທີ 672/ທຫລ, ລົງວັນທີ 02/09/2008.

ກົມບັນຊີ-ການເງິນທະນາຄານແຫ່ງ ສປປ ລາວ ອອກບົດແນະນຳການບັນທຶກບັນຊີກ່ຽວກັບຊັບສົມບັດຄົງທີ່ ດັ່ງຕໍ່ໄປນີ້ :

## I. ຈຸດປະສົງ

ບົດແນະນຳສະບັບນີ້ມີຈຸດປະສົງ ເພື່ອເຮັດໃຫ້ການບັນທຶກບັນຊີກ່ຽວກັບຊັບສົມບັດຄົງທີ່ຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນມີຄວາມຖືກຕ້ອງ, ສອດຄ່ອງກັບລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ມາດຕະຖານສາກົນດ້ານການລາຍງານການເງິນ (IFRS).

## II. ອະທິບາຍຄຳສັບ.

ຄຳສັບຕ່າງໆທີ່ນຳໃຊ້ໃນບົດແນະນຳສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຊັບສົມບັດຄົງທີ່** : ໝາຍເຖິງຊັບສົມບັດຄົງທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ທີ່ທະນາຄານ ແລະ ສະຖາບັນການເງິນມີໄວ້ ເພື່ອນຳໃຊ້ເຂົ້າໃນການບໍລິການ, ໃຫ້ເຊົ່າ, ໃຊ້ເຂົ້າໃນການບໍລິຫານງານ ໂດຍຕ້ອງມີເງື່ອນໄຂຄົບ ຖ້ວນດັ່ງຕໍ່ໄປນີ້:
   - ຄວາມເປັນໄປໄດ້ຂ່ອນຂ້າງແນ່ນອນທີ່ຊັບສິນນັ້ນຈະໃຫ້ປະໂຫຍດທາງດ້ານເສດຖະກິດໃນອານາຄົດບໍ່ຕ່ຳກວ່າ 1 ປີຂຶ້ນໄປ.
   - ມີຄວາມສາມາດກຳນົດຕົ້ນທຶນຂອງຊັບສິນນັ້ນໄດ້ຢ່າງສົມເຫດສົມຜົນ.